**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ ເລກທີ 01 /ພນ

ນະຄອນຫຼວງວຽງຈັນ, ວັນທີ 11 ກຸມພາ 2016

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 56/ນຍ ວ່າດ້ວຍການຄຸ້ມຄອງ ແລະ ແກ້ໄຂວຽກງານ ເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງ ກັບ ແຂວງ ທົ່ວປະເທດ

ໂດຍປະຕິບັດຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 56/ນຍ, ລົງວັນທີ 27 ຕຸລາ 2015 ວ່າດ້ວຍການຄຸ້ມຄອງ ແລະ ແກ້ໄຂວຽກງານເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງກັບແຂວງ ເພື່ອຄວາມເປັນເອກະພາບກັນໃນການປະຕິບັດວຽກງານເຂດແດນເຊື່ອມຕໍ່ ໃນຂອບເຂດທົ່ວປະເທດ, ລັດຖະມົນຕີວ່າການກະຊວງພາຍໃນ ຈຶ່ງອອກຄຳແນະນຳ ດັ່ງນີ້:

## I.ຈຸດປະສົງ

- ເພື່ອໃຫ້ການນຳ, ພະນັກງານ-ລັດຖະກອນ ຂອງນະຄອນຫຼວງ, ບັນດາແຂວງ ໄດ້ຮັບຮູ້, ເຊື່ອມຊຶມເນື້ອໃນຈິດໃຈ ຂອງຄຳສັ່ງ ນາຍົກລັດຖະມົນຕີ ສະບັບເລກທີ 56/ນຍ, ລົງວັນທີ 27 ຕຸລາ 2015 ຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ;
- ເພື່ອອະທິບາຍຄວາມໝາຍຂອງບາງຄຳສັບ, ກຳນົດທິດນຳ, ຂັ້ນຕອນ ການຄົ້ນຄ້ວາແກ້ໄຂວຽກງານເຂດແດນເຊື່ອມຕໍ່ ເຮັດໃຫ້ອົງການປົກຄອງທ້ອງຖິ່ນ ປະຕິບັດສະດວກ, ຖືກຕ້ອງ ແລະ ໄດ້ຮັບຜົນສຳເລັດ.

## II. ຄວາມໝາຍຂອງຄຳສັບ

- ວຽກງານເຂດແດນເຊື່ອມຕໍ່: ແມ່ນວຽກງານ ທີ່ກ່ຽວຂ້ອງກັບການກຳນົດ ແລະ ປັບປຸງເສັ້ນເຂດແດນລະຫວ່າງຂັ້ນແຂວງກັບຂັ້ນແຂວງ, ຂັ້ນເມືອງກັບຂັ້ນເມືອງ ແລະ ບ້ານກັບບ້ານ ຢູ່ພາຍໃນປະເທດ ແລະ ວຽກງານກ່ຽວກັບການຄຸ້ມຄອງບໍລິຫານພື້ນທີ່ດິນ ແລະ ຊັບພະຍາກອນຕ່າງໆ ໃນບໍລິເວນເຂດແດນເຊື່ອມຕໍ່ດັ່ງກ່າວ;
- **ເສັ້ນແບ່ງເຂດແດນ:** ແມ່ນສິ່ງທີ່ກຳນົດໃຫ້ເປັນເຄື່ອງໝາຍເຂດແດນລະຫວ່າງກັນຢ່າງເປັນທາງການທີ່ເບິ່ງເຫັນໄດ້ດ້ວຍຕາເປົ່າ (ແມ່ນ້ຳ, ສາຍຫ້ວຍ, ສັນພູ, ຖະໜົນ, ຫຼັກໝາຍ ຂອງຈຸດຕ່າງໆ ເທິງໜ້າດິນ ແລະ ອື່ນໆ);
- **ເຂດແດນເຊື່ອມຕໍ່:** ແມ່ນພື້ນທີ່ຢູ່ລຽບສອງຟາກຂອງເສັ້ນແບ່ງເຂດແດນລະຫວ່າງ ຂັ້ນແຂວງກັບຂັ້ນແຂວງ, ຂັ້ນເມືອງກັບຂັ້ນເມືອງ ແລະ ບ້ານກັບບ້ານ.

## III.ທິດນຳ

ການແກ້ໄຂບັນຫາເຂດແດນເຊື່ອມຕໍ່ໃຫ້ປະຕິບັດຕາມທິດນຳດັ່ງນີ້:

- ທັງສອງຝ່າຍຕ້ອງເຂົ້າຮ່ວມໃນການຄົ້ນຄວ້າ ແລະ ຕົກລົງເປັນເອກະພາບນຳກັນ;
- ມີວິໄສທັດກວ້າງໄກ ແລະ ຖືກຕ້ອງຕາມກົດໝາຍ;
- ໃຫ້ອົງການປົກຄອງທ້ອງຖິ່ນ ມີຄວາມສະດວກໃນການນຳເອົາແນວທາງນະໂຍບາຍລົງໄປເຖິງປະຊາຊົນໄດ້ຢ່າງທັນການ;
- ຕ້ອງຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຮອບດ້ານໃນທ້ອງຖິ່ນ;
- ກຳນົດເສັ້ນແບ່ງເຂດແດນຖືກຕ້ອງຕາມຫຼັກວິຊາການ, ເຫັນໄດ້ຢ່າງຈະແຈ້ງ, ມີຄວາມຊັດເຈນ ແລະ ບໍ່ຕັດຜ່າບ້ານຂອງປະຊາຊົນທີ່ຕັ້ງຂຶ້ນກ່ອນການກຳນົດເສັ້ນແບ່ງເຂດແດນ;
- ມີຄວາມຊັດເຈນ, ຈະແຈ້ງ ແລະ ສາມາດຈັດຕັ້ງປະຕິບັດໄດ້, ເມືອງ ແລະ ແຂວງຍັງມີຄົບເງື່ອນໄຂທີ່ຈະສືບຕໍ່ເປັນເມືອງ, ເປັນແຂວງຕໍ່ໄປ;
- ໃຫ້ປະຊາຊົນມີເງື່ອນໄຂໃນການດຳລົງຊີວິດ, ການສ້າງສາພັດທະນາ, ສາມາດເຂົ້າເຖິງໃຈກາງທາງດ້ານເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ການບໍລິການຂອງລັດໄດ້ຢ່າງສະດວກ, ຖືກຕ້ອງຕາມຄວາມມຸ້ງມາດປາຖະໜາ ແລະ ການຕັ້ງຖິ່ນຖານມາແຕ່ດັ້ງເດີມຂອງປະຊາຊົນສ່ວນໃຫຍ່ໃນທ້ອງຖິ່ນ.

## IV. ການຈັດຕັ້ງຄະນະຮັບຜິດຊອບ

### 1. ຄະນະຮັບຜິດຊອບຂັ້ນແຂວງ

#### 1.1 ໂຄງປະກອບບຸກຄະລາກອນ

ຄະນະຮັບຜິດຊອບແກ້ໄຂບັນຫາເຂດແດນເຊື່ອມຕໍ່ຂັ້ນແຂວງ ປະກອບດ້ວຍ:

- ຮອງເຈົ້າແຂວງຫຼືຮອງເຈົ້າຄອງນະຄອນຫຼວງຜູ້ຊີ້ນຳວຽກງານປົກຄອງ ຫົວໜ້າຄະນະ;
- ຫົວໜ້າພະແນກພາຍໃນ ຮອງຫົວໜ້າ;
- ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ (ທີ່ກ່ຽວຂ້ອງ) ຄະນະ;
- ຫົວໜ້າຫ້ອງວ່າການ ຄະນະ;
- ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄະນະ;
- ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ຄະນະ;
- ຫົວໜ້າກອງບັນຊາການທະຫານ ຄະນະ;
- ຫົວໜ້າຫ້ອງການຄະນະກຳມະການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຄະນະ;
- ຫົວໜ້າອົງການຈັດຕັ້ງອື່ນ ທີ່ຈຳເປັນ ຄະນະ.

#### 1.2 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບຂັ້ນແຂວງ

- ລົມທົບກັບຄະນະຮັບຜິດຊອບຂັ້ນເມືອງ ເພື່ອນຳພາ ແລະ ສຶກສາອົບຮົມໃຫ້ປະຊາຊົນທີ່ດຳລົງຊີວິດຢູ່ລຽບເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງກັບແຂວງຮັບຮູ້ເຊື່ອມຊຶມຄວາມໝາຍສຳຄັນ ຂອງເສັ້ນແບ່ງເຂດແດນ ແລະ ຈັດຕັ້ງປະຕິບັດຕາມບົດ

ບັນທຶກ ຢ່າງເຂັ້ມງວດ;

- ຄະນະຮັບຜິດຊອບແກ້ໄຂບັນຫາເຂດແດນເຊື່ອມຕໍ່ ຂັ້ນແຂວງ ຕ້ອງສົມທົບກັນໃນການລົງເກັບກຳຂໍ້ມູນ, ສຳຫຼວດພື້ນທີ່ຕົວຈິງ, ສັງລວມສະພາບ, ນຳພາຄົ້ນຄວ້າ ແລະ ເຮັດບົດລາຍງານໃຫ້ຫົວໜ້າອົງການປົກຄອງທ້ອງຖິ່ນຂັ້ນແຂວງ ຊາບ;
- ຈັດກອງປະຊຸມ ເພື່ອຄົ້ນຄ້ວາ, ປຶກສາຫາລື ແລະ ແກ້ໄຂບັນຫາຢ່າງທັນການ;
- ເຂົ້າຮ່ວມໃນກອງປະຊຸມ ແລະ ເປັນຜູ້ຕາງໜ້າຂອງອົງການປົກຄອງທ້ອງຖິ່ນຂອງຕົນໃນການແກ້ໄຂ ແລະ ຕັດສິນທຸກບັນຫາກ່ຽວກັບວຽກງານເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງກັບແຂວງ;
- ດຳເນີນກິດຈະກຳ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ປະສານງານກັບນະຄອນຫຼວງ, ແຂວງທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາເຂດແດນເຊື່ອມຕໍ່ລະຫວ່າງກັນ;
- ຄຸ້ມຄອງບັນດາເອກະສານ ແລະ ແຜນທີ່ ທີ່ກ່ຽວຂ້ອງກັບວຽກງານເຂດແດນເຊື່ອມຕໍ່;
- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## 2. ຄະນະຮັບຜິດຊອບຂັ້ນເມືອງ (ທີ່ກ່ຽວຂ້ອງ)

### 2.1 ໂຄງປະກອບບຸກຄະລາກອນ

ຄະນະຮັບຜິດຊອບແກ້ໄຂບັນຫາເຂດແດນເຊື່ອມຕໍ່ຂັ້ນເມືອງ ປະກອບດ້ວຍ:

- ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຫົວໜ້າຄະນະ;
- ຫົວໜ້າຫ້ອງການພາຍໃນ ຮອງຄະນະ;
- ຫົວໜ້າຫ້ອງວ່າການ ຄະນະ;
- ຫົວໜ້າຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄະນະ;
- ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ຄະນະ;
- ຫົວໜ້າກອງບັນຊາການທະຫານ ຄະນະ;
- ນາຍບ້ານ (ບ້ານທີ່ກ່ຽວຂ້ອງ) ຄະນະ;
- ຫົວໜ້າອົງການຈັດຕັ້ງອື່ນ ທີ່ຈຳເປັນ ຄະນະ.

### 2.2 ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບຂັ້ນເມືອງ

- ສົມທົບກັບອົງການປົກຄອງບ້ານທີ່ກ່ຽວຂ້ອງເພື່ອນຳພາ ແລະ ສຶກສາອົບຮົມ ໃຫ້ປະຊາຊົນທີ່ດຳລົງຊີວິດຢູ່ລຽບເຂດແດນເຊື່ອມຕໍ່ລະຫວ່າງ ນະຄອນຫຼວງ, ແຂວງກັບແຂວງ ຮັບຮູ້ເຊື່ອມຊຶມຄວາມໝາຍສຳຄັນຂອງເສັ້ນແບ່ງເຂດແດນ ແລະ ຈັດຕັ້ງປະຕິບັດຕາມບົດບັນທຶກ ຢ່າງເຂັ້ມງວດ;
- ຄະນະຮັບຜິດຊອບແກ້ໄຂບັນຫາເຂດແດນເຊື່ອມຕໍ່ຂັ້ນເມືອງ ຕ້ອງສົມທົບກັນໃນການລົງເກັບກຳຂໍ້ມູນ, ສຳຫຼວດພື້ນທີ່ຕົວຈິງ, ສັງລວມສະພາບ, ນຳພາຄົ້ນຄວ້າ ແລະ ເຮັດບົດລາຍງານໃຫ້ຫົວໜ້າອົງການປົກຄອງຂັ້ນແຂວງ;
- ຈັດກອງປະຊຸມ ເພື່ອຄົ້ນຄ້ວາ, ປຶກສາຫາລື ແລະ ແກ້ໄຂບັນຫາຢ່າງທັນການ;

- ເຂົ້າຮ່ວມກອງປະຊຸມ ແກ້ໄຂວຽກງານເຂດແດນເຊື່ອມຕໍ່ລະຫວ່າງ ນະຄອນຫຼວງ, ແຂວງກັບແຂວງ ຕາມການຊີ້ນຳຂອງຂັ້ນເທິງ;
- ດຳເນີນກິດຈະກຳ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ປະສານງານກັບນະຄອນຫຼວງ, ແຂວງທີ່ກ່ຽວຂ້ອງ ໃນການແກ້ໄຂບັນຫາເຂດແດນເຊື່ອມຕໍ່ລະຫວ່າງກັນ;
- ຄຸ້ມຄອງບັນດາເອກະສານ ແລະ ແຜນທີ່ ທີ່ກ່ຽວຂ້ອງກັບວຽກງານເຂດແດນເຊື່ອມຕໍ່ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
- ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## V. ຂັ້ນຕອນການຈັດຕັ້ງປະຕິບັດ

- ໃຫ້ຄະນະຮັບຜິດຊອບວຽກງານເຂດແດນເຊື່ອມຕໍ່ຂອງຂັ້ນແຂວງ, ຂັ້ນເມືອງ ທີ່ມີເຂດແດນເຊື່ອມຕໍ່ນຳກັນ ຮ່ວມກັນກວດຄືນເຂດແດນເຊື່ອມຕໍ່ລະຫວ່າງກັນບົນພື້ນຖານບົດບັນທຶກ ປີ 1999, ປີ 2005 ແລະ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 16/ນຍ, ລົງວັນທີ 30 ພຶດສະພາ 2007 ກ່ຽວກັບການແກ້ໄຂເຂດເຊື່ອມຕໍ່ 4 ແຂວງພາກໃຕ້ ວ່າຍັງມີຈຸດໃດທີ່ຍັງບໍ່ທັນຈະແຈ້ງ ແລະ ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້; ບົນພື້ນຖານບັນຫາທີ່ກວດພົບ, ນະຄອນຫຼວງ, ແຂວງ ທີ່ມີເຂດແດນເຊື່ອມຕໍ່ນຳກັນຈັດຕັ້ງກອງປະຊຸມຮ່ວມກັນ ເພື່ອປຶກສາຫາ ລື ແລະ ຊອກຫາວິທີແກ້ໄຂ, ຖ້າຈຳເປັນໃຫ້ພ້ອມກັນລົງກວດກາພື້ນທີ່ຕົວຈິງ ແລະ ເກັບກຳຂໍ້ມູນທີ່ກ່ຽວຂ້ອງໂດຍມີຫຼັກແຫຼ່ງຂອງປະຊາຊົນໃນທ້ອງຖິ່ນເຂົ້າຮ່ວມໃຫ້ຂໍ້ມູນ;
- ໃຫ້ຄະນະຮັບຜິດຊອບວຽກງານເຂດແດນເຊື່ອມຕໍ່ຂັ້ນແຂວງ ຈັດກອງປະຊຸມເພື່ອຜ່ານເນື້ອໃນທີ່ໄດ້ສຳຫຼວດ ແລະ ເກັບກຳມາປຶກສາຫາລືກັບພະແນກການ ແລະ ພາກສ່ວນທີ່ ກ່ຽວຂ້ອງຂອງຂັ້ນແຂວງ ເພື່ອໃຫ້ຮັບຮູ້ ແລະ ເປັນເອກະພາບ;
- ເມື່ອນະຄອນຫຼວງ, ແຂວງ ຕົກລົງກ່ຽວກັບເຂດແດນເຊື່ອມຕໍ່ໄດ້ແລ້ວ ໃຫ້ສົມທົບກັນສ້າງບົດບັນທຶກການກຳນົດເຂດແດນເຊື່ອມຕໍ່ ລະຫວ່າງກັນຄືນໃໝ່, ການສ້າງບົດບັນທຶກເຂດແດນເຊື່ອມຕໍ່ສະບັບໃໝ່ນັ້ນ ໃຫ້ກຳນົດເຂົ້າຄືນຈຸດທີ່ເປັນເອກະພາບກັນແລ້ວ ແລະ ຈຸດທີ່ມີການປ່ຽນແປງຈາກບົດບັນທຶກປີ 1999, ບົດບັນທຶກ ປີ 2005, ຄຳສັ່ງຂອງນາຍົກລັດຖະມົນຕີ, ສະບັບເລກທີ 16/ນຍ, ລົງວັນທີ 30 ພຶດສະພາ 2007 ແລະ ນິຕິກຳອື່ນ ທີ່ບັນດາອົງການປົກຄອງທ້ອງຖິ່ນເຫັນດີເປັນເອກພາບນຳກັນ ໂດຍເຮັດເປັນ 3 ສະບັບ ແຕ່ລະແຂວງເກັບມ້ຽນແຂວງລະ 1 ສະບັບ, ກະຊວງພາຍໃນເກັບມ້ຽນ 1 ສະບັບ ເພື່ອສະເໜີຂັ້ນເທິງ ພິຈາລະນາຮັບຮອງຕາມກົດໝາຍ ແລະ ລະບຽບການ;
- ກະຊວງພາຍໃນ ສະຫຼຸບສັງລວມ, ລາຍງານການກຳນົດເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງກັບແຂວງ ທົ່ວປະເທດ ໃຫ້ລັດຖະບານ ແລະ ສະເໜີສະພາແຫ່ງຊາດ ເພື່ອພິຈາລະນາ ແລະ ຮັບຮອງຢ່າງເປັນທາງການ;

- ພາຍຫຼັງນະຄອນຫຼວງ, ບັນດາແຂວງສຳເລັດການເຊັນບົດບັນທຶກລະຫວ່າງກັນ ແລະ ຂັ້ນເທິງຕົກລົງຮັບຮອງເອົາແລ້ວໃຫ້ຈັດຕັ້ງເຜີຍແຜ່, ສຶກສາອົບຮົມໃຫ້ປະຊາຊົນຂອງຕົນທີ່ດຳ ລົງຊີວິດຢູ່ບໍລິເວນເຂດແດນເຊື່ອມຕໍ່ໃຫ້ຮັບຮູ້, ເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຢ່າງເຂັ້ມງວດ;
- ໃນກໍລະນີ ບໍ່ສາມາດແກ້ໄຂບັນຫາກ່ຽວກັບເຂດແດນເຊື່ອມຕໍ່ໄດ້ ໃຫ້ສະເໜີຫາກະຊວງ ພາຍໃນ ເພື່ອລົງສຳຫຼວດເບິ່ງພື້ນທີ່ຕົວຈິງ, ນຳພາການຄົ້ນຄວ້າ ແລະ ແກ້ໄຂບົນພື້ນຖານທິດນຳ ແລະ ຫຼັກການທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້, ຫາກຍັງບໍ່ສາມາດຕົກລົງກັນໄດ້ ຈຶ່ງລາຍງານບັນຫາລະອຽດໃຫ້ລັດຖະບານພິຈາລະນາຕົກລົງ.

## VI. ການຄຸ້ມຄອງບໍລິຫານເຂດແດນເຊື່ອມຕໍ່

- ອົງການປົກຄອງທ້ອງຖິ່ນ ຕ້ອງສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ປະຊາຊົນຢູ່ຕາມເຂດແດນເຊື່ອມຕໍ່ໄດ້ດຳລົງຊີວິດ ແລະ ທຳມາຫາກິນດ້ວຍຄວາມສະຫງົບອຸ່ນອຽນ, ມີຄວາມສາມັກຄີປອງດອງ, ຫຼີກເວັ້ນບໍ່ໃຫ້ມີການເຄື່ອນໄຫວຂອງພວກຄົນບໍ່ດີຢູ່ຕາມເຂດແດນເຊື່ອມຕໍ່;
- ປະຊາຊົນທີ່ດຳລົງຊີວິດ ແລະ ທຳມາຫາກິນຢູ່ສອງຟາກເສັ້ນແບ່ງເຂດແດນລະຫວ່າງຂັ້ນແຂວງກັບຂັ້ນແຂວງ, ຂັ້ນເມືອງກັບຂັ້ນເມືອງ ແລະ ບ້ານກັບບ້ານ ຕ້ອງຮັບຮູ້ ແລະເຄົາລົບເສັ້ນແບ່ງເຂດແດນລະຫວ່າງກັນຢ່າງເຂັ້ມງວດ;
- ປະຊາຊົນທີ່ຕັ້ງບ້ານເຮືອນຢູ່ໃນເຂດແດນຂອງບ້ານໃດໃຫ້ຂຶ້ນສຳມະໂນຄົວນຳບ້ານນັ້ນ;
- ການຊົມໃຊ້ພື້ນທີ່ດິນ ຫຼື ຊັບພະຍາກອນ ໃນເຂດການປົກຄອງຂອງບ້ານໃດ, ເພື່ອທຳການຜະລິດຕ້ອງໄດ້ຮັບການອະນຸມັດຈາກອົງການປົກຄອງທີ່ເປັນເຈົ້າຂອງພື້ນທີ່ຢ່າງຖືກຕ້ອງຕາມກົດໝາຍ;
- ປະຊາຊົນທີ່ມີພື້ນທີ່ທຳການຜະລິດຢູ່ໃນພື້ນທີ່ການປົກຄອງຂອງບ້ານໃດ ໃຫ້ເສຍພາສີ ແລະພັນທະອາກອນໃຫ້ບ້ານນັ້ນ ຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ;
- ກໍລະນີມີປະຊາຊົນຂໍຍົກຍ້າຍໄປຂຶ້ນກັບການຄຸ້ມຄອງຂອງທ້ອງຖິ່ນອື່ນ ໃຫ້ທັງສອງຝ່າຍທີ່ກ່ຽວຂ້ອງປຶກສາຫາລືກັນ ຖ້າເຫັນວ່າບໍ່ມີຜົນສະທ້ອນຕໍ່ແນວທາງນະໂຍບາຍເຊັ່ນວ່າ ຍົກຍ້າຍໄປຂຶ້ນກັບການຄຸ້ມຄອງຂອງບ່ອນອື່ນນັ້ນ ຈະມີຜົນດີກວ່າຢູ່ບ່ອນເກົ່າກໍຄວນພິຈາລະນາ ຕາມເງື່ອນໄຂຕົວຈິງຢ່າງສົມເຫດສົມຜົນ;
- ຢູ່ຕາມເຂດແດນເຊື່ອມຕໍ່ ບໍ່ວ່າປະຊາຊົນຂອງທ້ອງຖິ່ນໃດກໍຕາມ ຖ້າມີການກະທຳຜິດຢູ່ບ່ອນໃດ ອົງການປົກຄອງທ້ອງຖິ່ນບ່ອນນັ້ນມີສິດ, ໜ້າທີ່ສະກັດກັ້ນ ແລະ ດຳເນີນຄະດີກັບຜູ້ກະທຳຜິດດັ່ງກ່າວ, ຫ້າມຖິ້ມຄວາມຮັບຜິດຊອບໃຫ້ກັນ ແລະ ກັນຢ່າງເດັດຂາດ.

## VII. ການຈັດຕັ້ງປະຕິບັດ

- ກະຊວງພາຍໃນ ເຜີຍແຜ່ຄຳແນະນຳໃຫ້ນະຄອນຫຼວງ, ແຂວງ ເພື່ອແນະນຳວິທີການ ແລະຂັ້ນຕອນການແກ້ໄຂບັນຫາ ເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງກັບແຂວງ

ແລະ ນຳພາເຮັດທົດລອງຢູ່ບາງຈຸດ ໃຫ້ສຳເລັດ ແລະ ທັນຕາມກຳນົດເວລາ;

- ບັນດາທ່ານໃນຄະນະຮັບຜິດຊອບ ແກ້ໄຂບັນຫາເຂດແດນເຊື່ອມຕໍ່ລະຫວ່າງນະຄອນ ຫຼວງ, ແຂວງກັບແຂວງ ຕ້ອງກຳແໜ້ນເນື້ອໃນຄຳສັ່ງວ່າດ້ວຍການຄຸ້ມຄອງ ແລະ ແກ້ໄຂວຽກງານເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງກັບແຂວງ ສະບັບເລກທີ 56/ນຍ, ລົງວັນທີ 27 ຕຸລາ 2015 ແລະ ຄຳແນະນຳສະບັບນີ້ ເພື່ອຮັບປະກັນຄວາມເຂົ້າໃຈ ແລະ ການຈັດຕັ້ງປະຕິບັດວຽກງານໃຫ້ເປັນເອກພາບກັນໃນທົ່ວປະເທດ;
- ນະຄອນຫຼວງ, ແຂວງ ໂດຍແມ່ນພະແນກພາຍໃນເປັນຜູ້ສ້າງແຜນການເຄື່ອນໄຫວລະອຽດ ໂດຍປະສານສົມທົບກັບນະຄອນຫຼວງ, ແຂວງ ທີ່ມີເຂດແດນເຊື່ອມຕໍ່ນຳກັນ ແລະ ຂຶ້ນແຜນງົບປະມານຮັບໃຊ້ວຽກງານດັ່ງກ່າວໃຫ້ທັນໃນສົກງົບປະມານ 2016-2017;
- ກະຊວງພາຍໃນເປັນໃຈກາງ ໃນການນຳພາຄົ້ນຄວ້າ, ແກ້ໄຂ ແລະ ນຳສະເໜີຂັ້ນເທິງທີ່ກ່ຽວຂ້ອງ ກ່ຽວກັບວຽກງານເຂດແດນເຊື່ອມຕໍ່ລະຫວ່າງນະຄອນຫຼວງ, ແຂວງກັບແຂວງ; ພະແນກພາຍໃນ ເປັນໃຈກາງໃນການນຳພາການຄົ້ນຄວ້າ, ແກ້ໄຂ ແລະ ນຳສະເໜີຂັ້ນເທິງ ກ່ຽວກັບວຽກງານເຂດແດນເຊື່ອມຕໍ່ຂອງອົງການປົກຄອງຂັ້ນເມືອງ; ຫ້ອງການພາຍໃນ ເປັນໃຈກາງໃນການນຳພາການຄົ້ນຄວ້າ, ແກ້ໄຂ ແລະ ນຳສະເໜີຂັ້ນເທິງ ກ່ຽວກັບວຽກງານເຂດແດນເຊື່ອມຕໍ່ລະຫວ່າງບ້ານກັບບ້ານ.

ດັ່ງນັ້ນ, ຈຶ່ງແນະນຳມາຍັງນະຄອນຫຼວງ, ແຂວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນ ຄາດໝາຍຈຸດປະສົງທີ່ກຳນົດໄວ້ ໃຫ້ປະກົດຜົນເປັນຈິງ.

ເຊັນແທນ ລັດຖະມົນຕີ ວ່າການກະຊວງພາຍໃນ

ທອງຈັນ ມະນີໄຊ